**ສະມາຄົມ ຊ່ວຍເຫຼືອຟື້ນຟູຄຸນນະພາບຊີວິດ (ສຊຟຄ)**

**Quality of Life Association (QLA)**

ເຮືອນເລກທີ 41/03, ບ້ານໂພນສະຫວັນໄຊ, ເມືອງແປກ, ແຂວງຊຽງຂວາງ House No.41/03, Phonsavanhxai Village, Peak District, Xiengkhouang province

# ຕໍາແໜ່ງ ຜູ້ປະສານງານ ໂຄງການ (Project Coordinator)

QLA ໄດ້ສ້າງຕັ້ງຂຶ້ນໃນປີ 2011 ເຄື່ອນໄຫວພາຍໃນແຂວງຊຽງຂວາງ ແລະ ໄດ້ຍົກລະດັບຈົດທະບຽນເປັນສະມາຄົມເຄື່ອນໄຫວໃນຂອບເຂດທົ່ວປະເທດໃນປີ 2020 ເພື່ອຈຸດປະສົງສະເພາະໃນການຊ່ວຍເຫຼືອຜູ້ເຄາະຮ້າຍຈາກລະເບີດບໍ່ທັນແຕກ (UXO) ແລະ ຄົນພິການ (PWD) ໃນ ສປປ ລາວ. QLA ໄດ້ຈັດຕັ້ງປະຕິບັດຫຼາຍໂຄງການໃນການຊ່ວຍເຫຼືອຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ເຊິ່ງລວມມີການລະດົມທຶນເພື່ອປິ່ນປົວຜູ້ທີ່ຖືກອຸປະຕິເຫດຈາກລະເບີດບໍ່ທັນແຕກ, ການຕິດຕາມຊຸກຍູ້ຜູ້ລອດຊີວິດ, ສໍາຫຼວດຜູ້ລອດຊີວິດຈາກລະເບີດບໍ່ທັນແຕກໃໝ່ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ເພື່ອຕອບສະໜອງຄວາມຕ້ອງການຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ສົ່ງຕໍ່ໃຫ້ສູນຟື້ນຟູໜ້າທີ່ການ ແລະ ບັນດາພະແນກການຢູ່ພາຍໃນແຂວງ ໃຫ້ການຊ່ວຍເຫຼືອດ້ານການແພດ ແລະ ສືບຕໍ່ປະສານສົມທົບກັບພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກກະສິກໍາ ແລະ ປ່າໄມ້ ຈັດຕັ້ງການລ້ຽງສັດ ແລະ ພະແນກສຶກສາ (ວິທະຍາໄລເຕັກນິກວິຊາຊີບແບບປະສົມປະສານ) ເພື່ອເຝິກອົບຮົມວິຊາຊີບຕ່າງໆ ໃຫ້ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ກຸ່ມຄົນພິການທົ່ວໄປ, ສະມາຄົມພວກເຮົາມີຄວາມຕ້ອງການເພື່ອນຮ່ວມງານລາຍລະອຽດດັ່ງລຸ່ມນີ້:

**ໜ້າທີ່ຮັບຜິດຊອບຂອງຜູ້ປະສານງານໂຄງການ:**

- ວາງແຜນໂຄງການ, ວາງແຜນກິດຈະກໍາ, ຈັດຕັ້ງປະຕິບັດກິດຈະກໍາ, ຕິດຕາມສະໜັບສະໜູນ ແລະ ສະຫຼຸບລາຍງານກິດຈະກໍາ ໃຫ້ເປັນໄປຕາມແຜນ ແລະ ມາດຖານທີ່ວາງໄວ້.
- ພົວພັນ ປະສານງານກັບອົງການຈັດຕັ້ງລັດ ຂັ້ນແຂວງ, ຂັ້ນເມືອງ ຮັບປະກັນການລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງຢ່າງມີປະສິດທິພາບ, ລວມທັງການພົວພັນກັບຜູ້ໃຫ້ທຶນ ສາມາດແປພາສາລາວ-ອັງກິດ ແລະ ອັງກິດ-ລາວ.
- ເປັນຕົວແທນໂຄງການ ແລະ ສະມາຄົມ ໃນການເຂົ້າກອງປະຊຸມ ແລະ ກິດຈະກໍາຕ່າງໆທີ່ກ່ຽວຂ້ອງກັບພາກລັດ ແລະ ຜູ້ໃຫ້ທຶນ.
- ລາຍງານຄວາມຄືບໜ້າ, ຜົນໄດ້ຮັບກິດຈະກໍາ, ບັນຫາ/ສິ່ງທ້າທາຍໃຫ້ກັບອົງກອນ, ຄູ່ຮ່ວມງານພາກລັດ ແລະ ຜູ້ໃຫ້ທຶນເປັນພາສາລາວ ແລະ ພາສາອັງກິດ.
- ສ້າງສາຍພົວພັນທີ່ດີກັບຄູ່ຮ່ວມພາກລັດ, ຄູ່ຮ່ວມພັດທະນາ ແລະ ກຸ່ມເປົ້າໝາຍ.
- ລາຍງານຄວາມຄືບໜ້າກ່ຽວກັບກິດຈະກໍາຢູ່ສະໜາມໃຫ້ກັບຫົວໜ້າແຜນງານ ຫຼື ຜູ້ອໍານວຍການ ສະມາຄົມ ຢ່າງເປັນປົກກະຕິ.

**ເງື່ອນໄຂຜູ້ສະໝັກ:**

- ສັນຊາດລາວ, ການສຶກສາຈົບຊັ້ນສູງ ຫຼື ທຽບເທົ່າປະລິນຍາຕີ ຂຶ້ນໄປ ດ້ານການພັດທະນາຊົນນະບົດ, ພັດທະນາຊຸມຊົນ, ວິທະຍາສາດສັງຄົມ (ສັງຄົມສົງເຄາະ) ຫຼື ສາຂາທີ່ກ່ຽວຂ້ອງ.
- ມີທັກສະການເຮັດວຽກເປັນທີມທີ່ດີ, ເປັນເຈົ້າການ, ມີຈິດອາສາ, ມີຄວາມມຸ່ງໝັ້ນ-ຕັ້ງໃຈໃນການຮຽນຮູ້ສິ່ງໃໝ່ໆ.
- ມີປະສົບການເຮັດວຽກພັດທະນາຊຸມຊົນ 3 ປີຂຶ້ນໄປ ສາມາດສື່ສານ ແລະ ຂຽນບົດລາຍງານເປັນພາສາອັງກິດໄດ້ຢ່າງຄ່ອງແຄ້ວ.
- ມີມະນຸດສໍາພັນດີໃນການເຮັດວຽກຮ່ວມກັບພະນັກງານທີ່ມີຄວາມແຕກຕ່າງດ້ານຊົນເຜົ່າ ແລະ ຊຸມຊົນ.
- ມີທັກສະໃນການນໍາໃຊ້ຄອມພິວເຕີ: Internet, MS Office (Word, Excel, PowerPoint, Email& Outlook).
- ມີຄວາມຮັກມັກ, ມີຄວາມຫ້າວຫັນ, ຮັບຜິດຊອບຕໍ່ໜ້າທີ່ວຽກງານ ໃນການເຮັດວຽກພັດທະນາຊຸມຊົນ.
- ສາມາດເດີນທາງໄປວຽກຕ່າງແຂວງ ແລະ ຕ່າງປະເທດໄດ້.

***ຊ່ອງທາງການສະໝັກ:*** ທ່ານທີ່ສົນໃຈສາມາດສົ່ງເອກະສານສະໝັກວຽກ (Cover Letter) ແລະ ຊີວະປະຫວັດ (CV)

ສົ່ງມາທີ່ ອີເມວ Phetsakhone29@gmail.com ແລະ CC: qualifasc@gmail.com

ໂທລະສັບ 061 211124, 020 55844477.

ຂໍ້ມູນເພີ່ມເຕີມກ່ຽວກັບສະມາຄົມ ເບິ່ງໄດ້ທີ່: www.qlalaos.org; https://www.facebook.com/QLACenter